# ສະຫລຸບຫຍໍ້
# ການປະຊຸມເປີດກ້ວາງຄັ້ງທີ 1
# ເຂດອ່າງຍ່ອຍເຊກອງ

# ປະເດັນທີ່ຮຽກຮ້ອງໃຫ້ມີການພິຈາລະນາໃນການສ້າງແຜນພັດທະນາອ່າງນ້ຳເຊກອງ (1)

- ໄລຍະເວລາໃນການສ້າງແຜນງານພັດທະນາອ່າງຄວນໃຫ້ທັນກັບສະພາບຕົວຈິງຂອງການພັດທະນາໃນປະຈຸບັນ
- ຊັບພະຍາກອນທາງດ້ານບຸກຄົນ ແລະ ທຶນຮອນ ໃຫ້ມີຄວາມເໝາະສົມ
- ການສ້າງເຄືອຂ່າຍ ແລະ ການມີສ່ວນຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງ
- ການສ້າງລະບົບການຕິດຕາມກວດກາ ແລະ ປະເມີນຜົນ
- ການແລກປ່ຽນຂໍ້ມູນຂ່າວສານລະຫວ່າງໜ່ວຍງານທີ່ກ່ຽວຂ້ອງ ແລະ ສ້າງໜ່ວຍງານປະສານງານ

# ປະເດັນທີ່ຮຽກຮ້ອງໃຫ້ມີການພິຈາລະນາໃນການສ້າງແຜນພັດທະນາອ່າງນ້ຳເຊກອງ (2)

- ການສຶກສາຜົນກະທົບແບບສະສົມທາງດ້ານສັງຄົມ, ເສດຖະກິດ ແລະ ສິ່ງແວດລ້ອມ ຂອງບັນດາໂຄງການພັດທະນາຕ່າງໆໃນເຊກອງ ເຊັ່ນ: ຜົນກະທົບຈາກຈາກສ້າງເຂື່ອນໄຟຟ້າ, ການສຳປະທານທີ່ດິນ ແລະ ອື່ນໆ
- ບັນຫາຂອງການນຳໃຊ້ທີ່ດິນ ເຊັ່ນ: ການສຳປະທານ, ການບຸກລຸກທີດິນປ່າໄມ້
- ບັນຫາຄວາມສ່ຽງຈາກໄພທຳມະຊາດຕ່າງໆ
- ບັນຫາຂອງການຮັກສາລະບົບນິເວດວິທະຍາ ແລະ ຄຸນນະພາບນ້ຳ
- ບັນຫາການຫລຸດລົງຂອງປະລິມານປາ ແລະ ເຄື່ອງປ່າຂອງດົງທີ່ຕິດພັນກັບບັນຫາການຄ້ຳປະກັນດ້ານສະບຽງອາຫານ

# ປະເດັນທີ່ຮຽກຮ້ອງໃຫ້ມີການພິຈາລະນາໃນການສ້າງແຜນພັດທະນາອ່າງນ້ຳເຊກອງ (3)

- ບັນຫາຜົນກະທົບຂ້າມຊາຍແດນ
- ການສຶກສາ ຕົ້ນທຶນ ແລະ ຜົນກຳໄລຂອງບັນດາໂຄງການພັດທະນາຕ່າງໆ
- ບັນຫາໃນການສ້າງຄວາມເຂົ້າໃຈຂອງຄວາມທຸກຈົນ ແລະ ການປັບປຸງຊີວິດການເປັນຢູ່ຂອງປະຊາຊົນ
- ຄວາມເຂົ້າໃຈໃນການຜະລິດສະບຽງອາຫານ ແລະ ການຜະລິດເປັນສິນຄ້າ
- ປັບປຸງການປະສານງານ ແລະ ການມີສ່ວນຮ່ວມໃນການຮັກສາຊັບພະຍາກອນທຳມະຊາດຮ່ວມກັນ

# ຂໍ້ຄິດເຫັນ ກ່ຽວກັບ ຜົນການສຶກສາຂັ້ນເບື້ອງຕົ້ນ ຂອງ 7L (1)

- ຈຸດປະສົງໃນການສຶກສາ ແລະ ການນຳໃຊ້ຂໍ້ມູນຄວນລະບຸໃຫ້ຊັດເຈນ
- ແຫລ່ງທີ່ມາຂອງຂໍ້ມູນ ແລະ ຫົວໜ່ວຍວັດແທກຂອງຂໍ້ມູນຄວນມີການກວດກາເບິ່ງຄືນເພື່ອຄວາມຖືກຕ້ອງ
- ຂໍ້ມູນຄວນມີການຮັບຮອງຈາກພາກສ່ວນທີ່ກ່ຽວຂອງໃນລະດັບແຂວງ ແລະ ເມືອງ
- ຄວນສຶກສາຜົນກະທົບຂອງການພັດທະນາອ່າງທັງ ທາງດ້ານບວກ ແລະ ລົບ ເຊັ່ນ: ການນຳໃຊ້ທີ່ດິນ ແລະ ການສ້າງເຂື່ອນໄຟຟ້າພະລັງງານ
- ມາດຖານຂອງຂໍ້ມຸນຄວນໃຊ້ຄວນພິຈາລະນາໃຊ້ມາດຖານປັດຽວກັນເພື່ອຄວາມເໝາະສົມໃນການວິເຄາະ ແລະ ສ້າງແຜນພັດທະນາອ່າງ

# ຂໍ້ຄິດເຫັນກ່ຽວກັບ ຜົນການສຶກສາຂັ້ນເບື້ອງຕົ້ນ ຂອງ 7L (2)

- ການຫາປາໃນອ່າງນໍາເຊກອງມີຄວາມສໍາຄັນ ຊຶ່ງ MRC ຄວນເຮັດວຽກຮ່ວມກັບອົງການຈັດຕັ້ງອື່ນໆເຊັ່ນ: WWF ເພື່ອຫາຂໍ້ມູນເພີ່ມເຕີມ

- ຂໍ້ມຸນຄວນມີການສຶກສາເພີ່ມເຕີມໃນບາງຂະແໜງການເຊັ່ນ:

  – ຂໍ້ມູນຂະແໜງການປຸກຝັງ ແລະ ຊົນລະປະທານ

  – ການປ່ຽນແປງການນໍາໃຊ້ຂອງທີ່ດິນເພື່ອການຜະລິດ, ກະສິກໍາສ່ວນບຸກຄົນ ແລະ ການສໍາປະທານ

  – ຂໍ້ມູນດ້ານສາທາ: ນໍ້າສະອາດ, ອັດຕາການເຈັບເປັນ ແລະ ອື່ນໆ

  – ຄຸນນະພາບນໍ້າ

  – ຄວາມສາມາດໃນການເຂົ້າເຖິງປະລິມານອາຫານ ແລະ ສານອາຫານ

# ຂໍ້ຄິດເຫັນກ່ຽວກັບ ຜົນການສຶກສາຂັ້ນເບື່ອງຕົ້ນ ຂອງ 7L (3)

- ຄວນມີຂະບວນການຕິດຕາມກວດກາຄວາມເປັນຢູ່ຂອງປະຊາຊົນຜູ້ທີ່ຖືກຍົກຍ້າຍທີ່ດິນ ເພື່ອຮັບປະກັນຊີວິດການເປັນຢູ່ຂອງປະຊາຊົນທີ່ໄດ້ຮັບຜົນກະທົບຈາກໂຄງການ

- ຂໍ້ມູນສ່ວນກ່ຽວກັບການປ່ຽນແປງການນຳໃຊ້ທີ່ດິນ ແລະ ເສດຖະກິດ,ສັງຄົມ ແລະ ຄວາມທຸກຈົນ, ສ່ວນໜຶ່ງສາມາດຫາໄດ້ຈາກ ບົດລາຍງານການສຶກສາຜົນກະທົບດ້ານ ສິ່ງແວດລ້ອມ ຂອງບັນດາໂຄງການຕ່າງໆ

- ຂໍ້ມູນກ່ຽວກັບຄຸນນະພາຍນ້ຳ ສາມາດແລກປ່ຽນຂໍ້ມູນນຳອົງການຕ່າງໆ ເຊັ່ນ: Earth system ແລະ ໜ່ວຍງານພາກລັດທີ່ກ່ຽວຂ້ອງ

- ການວິເຄາະຂໍ້ມູນຄວນພິຈາລະນາວ່າເຂດໃດມີຄວາມສ່ຽງສູງໄດ້ຮັບຜົນກະທົບຈາກການພັດທະນາ

- ນອກຈາກເກັບກຳຂໍ້ມູນ ແລ້ວ ຄວນ ເກັບກຳເອົາຂ່າວສານກ່ຽວກັບຂໍ້ຂັດແຍ່ງການນຳໃຊ້ນ້ຳໃນເຂດອ່າງເຊັ່ນກັນ

# ບາງປະເດັນເພີ່ມເຕີມທີ່ໄດ້ຈາກເວທີສົນທະນາ (1)

- ມັນຈຳເປັນຫລືບໍ່ທີ່ຈະຕ້ອງໃຫ້ມີຄະນະກຳມະການຄຸ້ມຄອງອ່າງໂຕ່ງ ໃນການປະສານງານ ແລະ ແກ້ໄຂບັນຫາການນຳໃຊ້ນ້ຳ
- ຈະສ້າງກິດຈະກຳໃຫ້ເປັນຮູບປະທຳ ແລະ ສ້າງຈິດສຳນຶກຂອງຜູ້ມີສ່ວນຮ່ວມ ແນວໃດໃນການປົກປັກຮັກສາຊັບພະຍາກອນນ້ຳ?
- ການສ້າງແຜນງົບປະມານຂອງລັດຄວນພິຈາລະນາວຽກງານຂອງການຄຸ້ມຄອງຊັບພະຍາກອນນ້ຳ
- ຄວນນຳເອົາປະເດັນກ່ຽວກັບການພັດທະນາຊັບພະຍາກອນນ້ຳ ຕິດພັນກັບຂະບວນການສ້າງແຜນແມ່ບົດຂອງແຂວງ
- ການສ້າງຄວາມເຂັ້ມແຂງໃຫ້ຊາວບ້ານ ແລະ ເນັ້ນໜັກການມີສວ່ນຮ່ວມ ແລະ ການປຶກສາຫາລືນຳຊາວບ້ານກ່ອນທີ່ຈະມີການດຳເນີນໂຄງການ
- ແຜນພັດທະນາໃນການລົງທຶນຄວນມີການທົບທວນ ແລະ ສ້າງໃຫ້ທັນກັບສະພາບປະຈຸບັນ

# ບາງປະເດັນເພີ່ມເຕີມທີ່ໄດ້ຈາກເວທີສົນທະນາ (2)

- ຜົນກະທົບຈາກການສ້າງເຂື່ອນ ສາມາດຟື້ນຟູສະພາບທຳມະຊາດໄດ້ ອາດໃຊ້ເວລາບໍ່ດົນ, ແຕ່ວ່າ ເຮັດແນວໃດເພື່ອທີ່ຈະຮ່ວມກັບຊຸມຊົນຊອກຫາວິທີ ໃນການພັດທະນາ ແລະ ປັບປຸງຊີວິດຂອງປະຊາຊົນໃຫ້ດີ ແລະ ຄຽງຄູ່ກັບການອານຸລັກ
- ການສຳປະທານທີ່ດິນ ເພື່ອການຂຸດຊາຍ ແລະ ຂຸດຄົ້ນບໍ່ຄຳ ເຮັດໃຫ້ຊີວິດການເປັນຢູ່ມີການປ່ຽນແປງໄປ. ສະນັ້ນ ຮຽກຮ້ອງໃຫ້ມີການສຶກສາຜົນກະທົບທັງທາງບວກ ແລະ ທາງລົບນຳກັນ
- ການສຳປະທານທີ່ດິນເຮັດໃຫ້ນ້ຳຕື້ນເຂີນ ແລະ ເນື້ອທີ່ການກະສິກຳກໍ່ໄດ້ຫລຸດລົງ
- ການສ້າງວັງສະຫງວນແມ່ນມີຄວາມສຳຄັນທີ່ສຸດຕໍ່ການຮັບປະກັບດ້ານສະບຽງອາຫານຂອງຊາວບ້ານ, ເຫັນໄດຊັດຈາກ ການສຶກສາຂອງ WWF ສະແດງໃຫ້ເຫັນ 80% ປະຊາຊົນແມ່ນບໍລິໂພກປາ
- ການສຶກສາຕະຫລາດການນຳໃຊ້ຊັບພະຍາກອນລະປະທານຄວນມີການທົບທວນຄືນ

# ບາງບົດຮຽນທີ່ໄດ້ຮູ້ຈາກບົດບັນລະຍາຍຂອງແຕ່ລະອົງການຈັດຕັ້ງ

- ພາລະບົດບາດຂອງອົງການຈັດຕັ້ງແມ່ນມີຄວາມສຳຄັນ ແລະ ຈຳເປັນທີ່ຈະຕ້ອງໄດ້ເຮັດໃຫ້ເກີດຄວາມກະຈ່າງແຈ້ງລະຫວ່າງໜ່ວຍງານທີ່ກ່ຽວຂ້ອງ
- ຜົນກະທົບຈາກການປ່ຽນແປງຂອງການນຳໃຊ້ທີ່ດິນ ແລະ ການທຳລາຍປ່າໄມ້ສົ່ງຜົນກະທົບໃຫ້ຄວາມສົມດຸນຂອງລະບົບ ນິເວດວິທະຍາ ແລະ ການຢູ່ດີກິນດີຂອງປະຊາຊົນ
- ຂໍ້ສົງໃສຂອງການປ່ຽນແປງດິນຟ້າອາກາດ ແລະ ການເກີດໄພທຳມະຊາດ ເຊັ່ນ: ໄພນ້ຳຖ້ວມ, ແຫ້ງແລ້ງ
- ການຄຸ້ມຄອງຊັບພະຍາກອນນ້ຳແບບປະສົມປະສານ ແລະ ບາງເຄື່ອງມືທີ່ນຳໄຊ້ໃນການຄຸ້ມຄອງຊັບພະຍາກອນທຳມະຊາດ ເຊັ່ນ: ຂໍມູນທາງດາວທຽມ ແລະ ການມີສ່ວນຮ່ວມຂອງບັນດາຜູ້ມີສ່ວນຮ່ວມຕ່າງໆ
- ຄວາມສຳຄັນຂອງການປະມົງຕໍ່ຄວາມໝັ້ນຄົງທາງດ້ານອາຫານ ແລະ ລາຍໄດ້ຂອງປະຊາຊົນໃນອາງເຊກອງ

# ບາດກ້າວຕໍ່ໄປ

- ສະຫລຸບບົດລາຍງານການປະຊຸມ ແລະ ສົ່ງໃຫ້ບັນດາທ່ານທີ່ເຂົ້າຮ່ວມ ແລະ ລົງເວັບໄຊ ຂອງ MRC
- ຈະນຳເອົາປະເດັນ ແລະ ບັນຫາຕ່າງໆທີ່ປຶກສາຫາລືໃນກອງປະຊຸມໄປພິຈາລະນາ ແລະ ປັບປຸງເອກະສານການສຶກສາ
- ຈະສືບຕໍ່ການສ້າງຂະບວນການຮຽນຮູ້ຮ່ວມກັນ ແລະ ການສ້າງເວທີສົນທະນາ ແລະ ກົນໄກໃນການປຶກສາຫາລືຂອງທຸກພາກສ່ວນທີ່ກ່ຽວຂ້ອງ ເພື່ອປັບປຸງຂະບວນການຕັດສິນໃຈ